

ສົມພາວັນ ແກ້ວບຸດຕາ. 2558. " **ປະເພນີການແຕ່ງດອງຂອງໄທແດງ ບ້ານສົບຮາວ ເມືອງສົບເບົາ ແຂວງຫົວພັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ** " **ใน วารสารวิถีสังคมมนุษย์.** ปีที่ 3 ฉบับที่ 2 กรกฎาคม - ธันวาคม. หน้า 204-237.

# ປະເພນີການແຕ່ງດອງຂອງໄທແດງ ບ້ານສົບຮາວ ເມືອງສົບເບົາ ແຂວງຫົວພັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## The wedding ceremony of Tai Daeng in Ban Sobhao, Sobbao District Huaphan province Lao people democratic republic


**ສົມພາວັນ ແກ້ວບຸດຕາ**[1]

Somphavanh Keoboutta





[1] ອາຈານສັງກັດໜ່ວຍງານວິເທດສຳພັນແລະວິຊາການ ມະຫາວິທະຍາໄລກາລະສິນ.

อาจารย์ มหาวิทยาลัยกาฬสินธุ์

## ບົດຄັດຫຍໍ້

ບົດຄວາມນີ້ມີວັດຖຸປະສົງເພື່ອສຶກສາກ່ຽວກັບປະເພນີການແຕ່ງດອງຂອງຄົນໄທແດງ ບ້ານສີບຮາວ ເມືອງສົບເບົາ ແຂວງຫົວພັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ໂດຍໃຊ້ແນວຄິດຊາດພັນສຳພັນ ແລະແນວຄິດອັດຕະລັກ ເນັ້ນການສຶກສາພາກສະໜາມເປັນຫລັກ ໃນການຮວບຮວມຂໍ້ມູນ ແລະ ນຳສະເໜີໂດຍການພັນລະນາວິເຄາະ.

ໄທແດງ ເປັນກຸ່ມຊາດຕິດພັນໜຶ່ງ ທີ່ມີປະເພນີ ແລະ ວັດທະນະທຳຕ່າງໆ ທີ່ໜ້າສົນໃຈ ໂດຍສະເພາະແມ່ນປະເພນີການແຕ່ງດອງ, ເຊິ່ງເປັນປະເພນີ ທີ່ມີຄວາມເປັນເອກະລັກສະເພາະຕົນ, ເພາະປະເພນີການແຕ່ງດອງຂອງຄົນໄທແດງນັ້ນມີຫລາຍຂັ້ນຕອນໂດຍເລີ່ມຈາກຂັ້ນຕອນການໄປລົມລາ,ຈາກນັ້ນກໍຈະເປັນຂັ້ນຕອນຂອງການໄປຖາມເຂົ້າປັ້ນ ແລະຂັ້ນຕອນການກ່າວແລ້ວກໍຈະເປັນຂັ້ນຕອນການໄປຖາມສິ້ນແລ້ວ ຕໍ່ໄປຈຶ່ງຈະແມ່ນຂັ້ນຕອນການກຽມກິນດອງເຊິ່ງມີຫລາຍຂັ້ນຕອນ, ຈາກນັ້ນກໍຈະເປັນຂັ້ນຕອນການກຽມເຄື່ອງໄປເຮືອນຜົວ ແລະສຸດທ້າຍກໍເປັນຂັ້ນຕອນການຮັບມໍລະດົກ ຫລືການແບ່ງມໍລະດົກ ທີ່ໄດ້ຈາກເຮືອນຂອງສາມີຂອງຕົນເອງ. ເຊິ່ງຂັ້ນຕອນຕ່າງໆ ທີ່ໄດ້ກ່າວມານັ້ນ, ແຕ່ລະຂັ້ນຕອນລ້ວນແລ້ວແຕ່ມີລັກສະນະພິເສດ

ແລະ ສຳຄັນເຊິ່ງເປັນເອກະລັກສະເພາະຂອງໄທແດງ, ຖ້າຂາດຂັ້ນຕອນໃດຂັ້ນຕອນໜຶ່ງໄປແລ້ວກໍ ຈະເຮັດໃຫ້ການແຕ່ງດອງນັ້ນບໍ່ສົມບູນ, ເພາະມັນບົ່ງບອກເຖິງການປ່ຽນແປງຄັ້ງຍິ່ງໃຫຍ່ຂອງແມ່ຍິງໄທແດງເລີຍກໍວ່າໄດ້; ດັ່ງນັ້ນ,ປະເພນີການແຕ່ງດອງຂອງໄທແດງນັ້ນ, ຈຶ່ງເປັນປະເພນີທີ່ສະແດງເຖິງຄວາມເປັນຕົວຕົນຂອງໄທແດງບໍ່ວ່າຈະອາໄສຢູ່ແຫ່ງໃດກໍຕາມ.

ເຖິງຢ່າງໃດກໍຕາມ, ໃນປັດຈຸບັນໄທແດງທີ່ບ້ານສີບຮາວ ເມືອງສີບເບົາ ແຂວງຫົວພັນ ໄດ້ມີການຕິດຕໍ່ພົວພັນຄ້າຂາຍກັບສັງຄົມພາຍນອກ, ໂດຍສະເພາະກັບສັງຄົມລາວພຸດ.ດັ່ງນັ້ນ, ຈຶ່ງເຮັດໃຫ້ມີການປ່ຽນແປງໄປຕາມກະແສສັງຄົມທີ່ມີການປະສົມປະສານກັບວັດທະນະທຳລາວພຸດ,ຈຶ່ງເຮັດໃຫ້ຄົນໄທແດງມີການຮັບເອົາວັດທະນະທຳດັ່ງກ່າວ ໂດຍສະເພາະການແຕ່ງດອງເພາະວ່າດ້ານປະເພນີວັດທະນະທຳຂອງລາວພຸດ ເຊິ່ງມີຂັ້ນຕອນບໍ່ຫລາຍ ແລະບໍ່ຕ້ອງໃຊ້ເວລາດົນອີກ, ດັ່ງນັ້ນ ຈຶ່ງເປັນໄປໄດ້ຫລາຍທີ່ໄທແດງຈະຮັບເອົາປະເພນີດັ່ງກ່າວແລະອີກເຫດຜົນໜຶ່ງ ກໍຄື ເມື່ອໄທແດງໄດ້ມາຕັ້ງຖິ່ນຖານຢູ່ກັບກຸ່ມລາວພຸດແລ້ວ, ກໍເຮັດໃຫ້ມີການພົວພັນ ແລະແລກປ່ຽນກັນຫລາຍໆດ້ານ, ສະນັ້ນແລ້ວປະເພນີການແຕ່ງດອງຂອງໄທແດງ ຈຶ່ງມີຄວາມຄ້າຍຄືກັບປະເພນີ ການແຕ່ງດອງຂອງລາວພຸດເປັນສ່ວນຫລາຍ.

**ຄຳສຳຄັນ:ໄທແດງ,ປະເພນີການແຕ່ງດອງຂອງໄທແດງ.**

## Abstract

The objective of this article was to study about the wedding ceremony of Tai Daeng in Ban Sobhao, Sobbao District Huaphan province, Lao people democratic republic by using the concept of ethnic relationsand the concept of Identities, for the data collection was to emphasize of the practical education and presented by narrative analysis.

Tai Daeng is atribe thathave many interesting traditions and cultures for especially the wedding ceremony because the wedding of Tai Daeng have many steps. The first step is to philander next is the step of askingsome sticky riceand said somethings about the wedding, next is to prepare for wedding, there are too many steps, after that is to prepare somethings move to husband's house and finally is the step of receiving inheritance or sharing inheritance that receive from own husband's house.In each steps are very important and have characteristic of Tai Daeng. If there missed some steps, that wedding is not perfectly. Because it means the important change of Tai Daengs' women. So the wedding ceremony of Tai Daeng is the ceremony that to show the characteristic of them, although where they are.

Anyway, nowadays Tai Deang at Sobhao Village, Sobbao District Huaphan Province had promoted trade involvement with external society, especially Lao Buddhist Society. So this makes a change according to the social streams has mix with Lao Buddhist Culture. This makes Tai Deang had received that Culture. Especially, the wedding because Lao Buddhist culture, there are not many steps and is not spend long time. It is impossible Tai Deang will received that Culture and another reasons, when Tai Deang had been settlement with Lao Buddhist people is makes involve together and all kinds of exchange, so that, mostly the wedding ceremony of Tai Daeng is similar the wedding ceremony of Lao Buddhist.

**Keyword:Tai Daeng, The wedding ceremony**

## ບົດນຳ

ບ້ານສົບຣາວ ປັດຈຸບັນຢູ່ໃນເຂດສົບຣາວ ເມືອງສົບເບົາ ແຂວງຫົວພັນ, ຕັ້ງຢູ່ທາງທິດຕາເວັນອອກສຽງເໜືອ ຂອງປະເທດລາວ. ມີຊາຍແດນຕິດກັບປະເທດຫວຽດນາມ. ປັດຈຸບັນບ້ານສົບຣາວມີປະຊາກອນອາໄສຢູ່ປະມານ 125 ຄົວເຮືອນ, ປະຊາກອນສ່ວນຫລາຍແລ້ວແມ່ນເປັນໄທແດງທີ່ນັບຖືສາສະໜາຜີ ແລະມີຄອບຄົວທີ່ເປັນລາວພຸດປະມານ 6 ຄອບຄົວ ທີ່ນັບຖືພຸດທະສາສະໜາ.ບ້ານສົບຣາວຫ່າງຈາກຊາຍແດນຫວຽດນາມ ປະມານ 6 ກິໂລແມັດ,ໂດຍມີເສັ້ນທາງເຊື່ອມຕໍ່ກັບບ້ານແກນຕື໊ດ

ແຂວງແທງຮວາປະເທດຫວຽດນາມ.ພູມີສາດຂອງບ້ານສິບຮາວ ນັ້ນ ມີລັກສະນະເປັນທີ່ຮາບພຽງຕາມພູ, ມີແມ່ນ້ຳ 2 ສາຍ ໄຫລ ຜ່ານຄື:ແມ່ນ້ຳທີ່ໄຫລມາຈາກເມືອງຊຽງຄໍ້ທາງເໜືອກັບແມ່ນ້ຳ ຮາວທີ່ໄຫລຂື້ນມາຈາກເມືອງວຽງໄຊ ເຊິ່ງແມ່ນ້ຳທັງສອງສາຍ ນີ້ໄຫລມາບັນຈົບກັນທີ່ ບໍລິເວນພູຫາດຫລີ່ບ້ານສິບຮາວ ແລ້ວ ໄຫລລົງສູ່ປະເທດຫວຽດນາມ ບໍລິເວນທີ່ແມ່ນ້ຳມາກັບແມ່ນ້ຳ ຮາວມາບັນຈົບກັນນັ້ນ ຮຽກວ່າ "ສິບຮາວ" ເຊິ່ງເປັນທີ່ມາຂອງ ຊື່ໝູ່ບ້ານ (ທ່ານບຸນພອນ ຈາວອີ ນາຍບ້ານສິບຮາວ ສຳພາດ ເມື່ອວັນທີ 26 ສິງຫາ2010)

ບ້ານສິບຮາວນີ້ມີອານາເຂດຕິດຕໍ່ກັບໝູ່ບ້ານຕ່າງໆດັ່ງນີ້

ຕິດເໜືອ ຕິດກັບບ້ານນາຟານເມືອງສິບເບົາ

ທິດຕາເວັນອອກ ຕິດກັບ ພູເຂົາ

ທິດຕາເວັນຕົກ ຕິດກັບບ້ານໃໝ່ເມືອງສິບເບົາ

ທິດໃຕ້ ຕິດກັບ ບ້ານກາງສິບຮາວ

ຈາກການເກັບຂໍ້ມູນພາກສະໜາມທີ່ບ້ານສິບຮາວເມືອງ ສິບເບົາ ແຂວງຫົວພັນ ປະເທດລາວ ແລະຈາກຄຳໃຫ້ສຳພາດ ຂອງທ່ານບຸນສີ ທີ່ເປັນໄທແດງບ້ານສິບຮາວ (ສຳພາດ ເມື່ອ 29 ສິງຫາ 2010)ໄດ້ກ່າວວ່າ ຊຸມຊົນຂອງຊາວໄທແດງບ້ານ

ສິບ ຣາວນີ້ໄດ້ມາຕັ້ງຖິ່ນຖານ ໃນປີ ຄ.ສ 1460 ຢູ່ບໍລິເວນພູຫາດຫລີ່ ຈຸດທີ່ແມ່ນ້ຳຣາວໄຫລມາຕົກໃສ່ແມ່ນ້ຳມາເຊິ່ງເປັນທີ່ມາຂອງຊື່ໝູ່ບ້ານ"ສິບຣາວ" ມາຮອດປັດຈຸບັນ ກໍເປັນໄລຍະເວລາ 550 ປີ ໂດຍກຸ່ມຄົນທີ່ມາຕັ້ງຖິ່ນຖານຕອນທຳອິດນັ້ນແມ່ນອົບພະຍົບມາຈາກເມືອງແດງ ຜ່ານເຂົ້າມາທາງເມືອງໂສຍ ແລະ ມາຕັ້ງບ້ານເຮືອນຢູ່ໃນພື້ນທີ່ບ້ານສິບຣາວໃນປັດຈຸບັນ.

ໄທແດງ ຫລືໄຕ່ແຫລງ ເປັນກຸ່ມຊາດພັນໜຶ່ງທີ່ດຳລົງຊີວິດຢູ່ທາງພາກເໜືອຂອງປະເທດລາວ ໂດຍສະເພາະຢູ່ໃນແຂວງຫົວພັນ ແລະກະແຈກກະຈາຍໄປຕາມແຕ່ລະແຂວງຂອງປະເທດລາວເຊັ່ນ: ແຂວງຊຽງຂວາງ, ຫລວງພະບາງ, ວຽງຈັນ, ນະຄອນຫລວງວຽງຈັນ ແລະທາງແຂວງບໍລິຄຳໄຊ. ໄທແດງ ເປັນກຸ່ມຊາດພັນທີ່ມີປະເພນີ ແລະວັດທະນະທຳທີ່ເປັນເອກະລັກສະເພາະຕົນ, ໂດຍສະເພາະປະເພນີການແຕ່ງດອງ ຫລືການກິນດອງຂອງໄທແດງນັ້ນ, ຈະມີລັກສະນະພິເສດ ແລະມີຄວາມໜ້າສົນໃຈໃນການປະກອບພິທີກຳດັ່ງກ່າວ ເຊິ່ງເຮັດໃຫ້ໄທແດງມີຄວາມເປັນເອກະລັກສະເພາະຕົນ. ການແຕ່ງດອງຂອງໄທແດງນັ້ນມີຫລາຍຂັ້ນຕອນເຊິ່ງແຕ່ລະຂັ້ນຕອນນັ້ນ ລ້ວນແລ້ວແຕ່ສຳຄັນ, ເພາະມັນສະແດງເຖິງການໃຫ້ກຽດ, ແລະການໃຫ້ຄວາມເຄົາລົບນັບຖືຜູ້ອາວຸໂສ ຫລືຜູ້ທີ່ເປັນເຈົ້າຂອງບ້ານເຮືອນ, ຫລືເຈົ້າໂຄດລຸງຕາຂອງທັງສອງຝ່າຍ. ເພາະວ່າ ແມ່ຍິງຂອງໄທ

ແດງ, ເມື່ອແຕ່ງດອງໄປແລ້ວ, ຕົນເອງກໍຈະຕ້ອງຍ້າຍອອກຈາກບ້ານເຮືອນຂອງຕົນເພື່ອໄປຢູ່ກັບຄອບຄົວຂອງສາມີແລະຕັດການນັບຖືຜີບັນພະບຸລຸດທີ່ຕົນນັບຖືແລ້ວ ໄປນັບຖືຜີບັນພະບຸລຸດຂອງຝ່າຍສາມີແທນ, ເຊິ່ງທຸກສິ່ງທຸກຢ່າງ ກໍຈະຂຶ້ນກັບຄອບຄົວຂອງຝ່າຍສາມີເປັນຜູ້ດູແລແມ່ນແຕ່ການຮັບມໍລະດົກຈາກຄອບຄົວ,ເຊິ່ງແມ່ຍິງໄທແດງກໍຈະໄດ້ຮັບມໍລະດົກຈາກຄອບຄົວຂອງສາມີແທນຄອບຄົວຂອງຕົນເອງ.

ເຖິງແນວໃດກໍຕາມ, ໃນປັດຈຸບັນສັງຄົມຈະມີການປ່ຽນແປງໄປຕາມກະແສຂອງສັງຄົມທີ່ມີຄວາມຈະເລີນ, ເຮັດໃຫ້ມີການປະສົມປະສານກັນ ທາງດ້ານວັດທະນະທຳ ໂດຍສະເພາະແມ່ນວັດທະນະທຳຂອງລາວພຸດ, ເຮັດໃຫ້ໄທແດງທີ່ບ້ານສົບຮາວເມືອງສົບເບົາ ແຂວງຫົວພັນ ໄດ້ມີການປະສົມປະສານກັນທາງດ້ານວັດທະນະທຳຂອງລາວພຸດເຊັ່ນດຽວກັນ. ດັ່ງນັ້ນ, ຈຶ່ງເຮັດໃຫ້ປະເພນີການແຕ່ງດອງຂອງໄທແດງ ທີ່ບ້ານສົບຮາວ ເມືອງສົບເບົາແຂວງຫົວພັນມີການປ່ຽນແປງໄປຕາມກະແສຂອງສັງຄົມທີ່ມີຄວາມຈະເລີນແລະກ້າວໜ້າ, ໂດຍສະເພາະແມ່ນວັດທະນະທຳຂອງລາວພຸດ. ເຊິ່ງໃນບົດຄວາມນີ້ຜູ້ຂຽນຈະນຳສະເໜີກ່ຽວກັບປະເພນີການແຕ່ງດອງຂອງໄທແດງທີ່ບ້ານສົບຮາວ ເມືອງສົບເບົາ ແຂວງຫົວພັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ເຊິ່ງເປັນປະເພນີທີ່ຜູ້ຂຽນມີຄວາມສົນໃຈເປັນພິເສດ

ໂດຍສະເພາະຄົນທີ່ຈະໄປເປັນລູກສະໃພ້ ຫລືລູກໃພ້ເຊິ່ງໄທແດງເອີ້ນວ່າ**"ລູກເປີ້ຫລືລູກເພີ້"** ຈະຕ້ອງນຳເອົາສິ່ງຂອງ ຫລາຍຢ່າງເພື່ອໄປມອບ ຫລືສົມມາໃຫ້ແກ່ພໍ່ແມ່ ແລະຍາດພີ່ນ້ອງຂອງທາງຝ່າຍຊາຍ ແລະຝ່າຍຊາຍກໍຕ້ອງກຽມເຄື່ອງຂອງໄປໃຫ້ທາງຝ່າຍຍິງຄືກັນ. ເນື່ອງຈາກວ່າການແຕ່ງດອງຂອງ ໄທແດງນັ້ນເປັນການແຕ່ງເພື່ອຮັບເອົາລູກໃພ້ ເຂົ້າມາຢູ່ເຮືອນຮ່ວມກັບຝ່າຍຊາຍຫລືທາງຝ່າຍຜົວ, ແລະນອກຈາກນັ້ນແລ້ວກໍຍັງ ມີລາຍລະອຽດຫລາຍຂັ້ນຕອນເພື່ອໄປຂໍສາວຂອງໄທແດງ. ດັ່ງນັ້ນ,ຈຶ່ງເຮັດໃຫ້ຜູ້ຂຽນມີຄວາມສົນໃຈ ທີ່ຈະສຶກສາກ່ຽວກັບປະເພນີດັ່ງກ່າວເຊິ່ງຜູ້ຂຽນຈະໄດ້ນຳສະເໜີໃນລາຍລະອຽດຕ່າງໆຕໍ່ໄປນີ້:

## 1. ປະເພນີການແຕ່ງດອງຂອງໄທແດງ.

ປະເພນີການແຕ່ງດອງຫລືການກິນດອງໝາຍເຖິງການແຕ່ງງານເຊິ່ງໃນຊຸມຊົນ ໄທແດງ ມີຢູ່ 2 ລັກສະນະ ຄື: ການແຕ່ງດອງ ທີ່ເກີດຈາກການຕົກລົງປົງໃຈຂອງໜຸ່ມສາວທັງຄູ່ແລະເກີດຈາກການຕົກລົງກັນຂອງຜູ້ປົກຄອງຂອງທັງສອງກ້າສອງຝ່າຍ. ການທຳຄວາມຮູ້ຈັກສະໜິດສະໜົມກັນຈົນກະທັ່ງສານສຳພັນໄປສູ່ຄວາມຮັກນັ້ນ ໜຸ່ມສາວໄທແດງຈະໃຊ້ໂອກາດທີ່ໄດ້ຮ່ວມກິດຈະກຳຕ່າງໆ ຮ່ວມກັນໃນສັງຄົມ ເຊັ່ນວ່າ: ການຖາງໄຮ່ໄຖນາ, ການປູກເຂົ້າໄຮ່, ການເຮັດນາ, ກ່ຽວເຂົ້າ,

ຟາດເຂົ້າ, ການລົງຂ່ວງເຂັນຝ້າຍ ແລະໃນການຮ່ວມງານບຸນປະເພນີເຫລົ່ານີ້ເປັນຕົ້ນ. ເນື່ອງຈາກວ່າໃນສັງຄົມໄທແດງຍັງມີການຂໍແຮງກັນໃນ ການເຮັດໄຮ່, ເຮັດນາຫລື ເຮັດວຽກງານທີ່ຕ້ອງໃຊ້ແຮງງານຄົນຫລາຍເຊິ່ງແຕ່ລະຄົວເຮືອນກໍຈະໜູນວຽນກັນໄປຈຶ່ງເຮັດໃຫ້ໜຸ່ມສາວມີໂອກາດໄດ້ພົບປະໂອ້ລົມກັນໃນລະຫວ່າງເຮັດວຽກຢູ່ສະເໜີ ແລະນຳໄປສູ່ການຮັກໃຄ່ກັນຈົນເຖິງຕົກລົງປົງໃຈທີ່ຈະໃຊ້ຊີວິດຢູ່ຮ່ວມກັນ. (ລາຊັນ ນິລະວັນນາພາ. 2010)

ໄທແດງ ເມື່ອແຕ່ງດອງແລ້ວ ຝ່າຍຍິງຈະອອກຈາກເຮືອນແລ້ວຍ້າຍໄປຢູ່ເຮືອນຂອງສາມີແລະຕ້ອງປ່ຽນການນັບຖືຜີບັນພະບຸລຸດຂອງຕົນຈາກເດີມທີ່ນັບຖືຜີຕາມຈາວ(ນາມສະກຸນ) ຂອງພໍ່ຕົນເອງ ແລ້ວມານັບຖືຜີບັນພະບຸລຸດຕາມຈາວຂອງຝ່າຍສາມີແທນ ແລະປະຕິບັດຕາມຂໍ້ຄະລຳຂອງຕະກູນຝ່າຍສາມີເຊິ່ງມີລາຍລະອຽດຕາມຂັ້ນຕອນທີ່ຈະກ່າວຕໍ່ໄປນີ້

### 1.1 ການໄປລົມລາ

ຕາມທຳນຽມຂອງໄທແດງແລ້ວເມື່ອໜຸ່ມສາວຕົກລົງທີ່ຈະໃຊ້ຊີວິດຢູ່ຮ່ວມກັນແລ້ວ, ຝ່າຍຊາຍຈະພາຜູ້ເຖົ້າຜູ້ແກ່ມາທຳການສູ່ຂໍສາວທີ່ຕົນຮັກກັບພໍ່ແມ່ຂອງຝ່າຍຍິງ ເຊິ່ງຂັ້ນຕອນທຳອິດ ນີ້ຮຽກວ່າ: "**ການໄປລົມລາ**" ໂດຍຍາດພີ່ນ້ອງຂອງຝ່າຍ

ຊາຍຈະຕ້ອງຫ້າງຫາກະກຽມ ສິ່ງຂອງເຊິ່ງປະກອບໄປດ້ວຍ ສາມໜໍ່ຫາດ, ສາມໜໍ່ພູ ເພື່ອນຳໄປຍັງເຮືອນຂອງຝ່າຍຍິງ ແລະ ແຈ້ງພໍ່ແມ່ແລະຍາດພີ່ນ້ອງເພື່ອໃຫ້ຮັບຮູ້ແລະມອບສິ່ງຂອງທີ່ກຽມໄປໃຫ້ເພື່ອເປັນການທາບທາມໃນເບື້ອງຕົ້ນກ່ອນວ່າ ຈະຍິນຍອມພ້ອມໃຈໃຫ້ບ່າວສາວທັງຄູ່ແຕ່ງດອງກັນ ຫລືບໍ່, ເຊິ່ງຕາມທຳນຽມແລ້ວ ຍາດພີ່ນ້ອງຂອງຝ່າຍຍິງກໍຈະຮັບໜໍ່ຫາດ, ໜໍ່ພູນັ້ນໄວ້ເພື່ອພິຈາລະນາຄຸນສົມບັດຂອງຝ່າຍຊາຍ ແລະສອບຖາມຄວາມສະໝັກໃຈຂອງລູກສາວກ່ອນເຊິ່ງອາດຈະປະໄລຍະເວລາໄວ້ໃນໄລຍະໜຶ່ງ ຫາກບໍ່ເຫັນຍາດພີ່ນ້ອງຂອງຝ່າຍຍິງນຳເອົາໜໍ່ຫາດ, ໜໍ່ພູກັບຄືນມານັ້ນ ກໍ ສະແດງວ່າຝ່າຍຍິງເຫັນດີນຳ.

### 1.2 ການໄປຖາມປັ້ນເຂົ້າ

ຈາກນັ້ນເປັນຂັ້ນຕອນທີສອງເຊິ່ງຮຽກວ່າ"ການຖາມປັ້ນເຂົ້າ" ໂດຍຍາດພີ່ນ້ອງຂອງທາງຝ່າຍຊາຍຈະຕ້ອງຫ້າງຫາກະກຽມສິ່ງຂອງອັນປະກອບໄປດ້ວຍ: ຫ້າໜໍ່ຫາດ, ຫ້າໜໍ່ພູ, ຜ້າສິ້ນ, ເສື້ອ ແລະປອກແຂນ ເພື່ອນຳໄປຍັງເຮືອນຂອງຝ່າຍຍິງແລະມອບໃຫຍາດພີ່ນ້ອງທາງຝ່າຍຍິງແລະສອບຖາມເອົາຄວາມອີກເທື່ອໜຶ່ງວ່າຕົກລົງຈະເອົາແບບໃດ ແລະຈັດກຳນົດເຮັດພິທີແຕ່ງດອງເມື່ອໃດ.ເມື່ອສອບຖາມກັນຮຽບຮ້ອຍແລ້ວຍາດພີ່ນ້ອງຝ່າຍຊາຍກໍກັບມາທີ່ເຮືອນແລະລໍຖ້າຟັງຂ່າວຈາກຝ່າຍຍິງ, ຫາກ

ຍາດພີ່ນ້ອງຝ່າຍຍິງບໍ່ສົ່ງຄືນສິ່ງຂອງທີ່ນໍາໄປມອບໃຫ້ກັບມາຍັງເຮືອນຝ່າຍຊາຍ ກໍສະແດງວ່າ ຍາດພີ່ນ້ອງຝ່າຍຍິງໄດ້ຍອມຮັບຝ່າຍ ຊາຍແລ້ວ, ແຕ່ຖ້າຫາກຍາດພີ່ນ້ອງສົ່ງສິ່ງຂອງຄືນກັບມາກໍຖືວ່າບໍ່ຍອມຮັບຝ່າຍຊາຍ ແລະຂັ້ນຕອນທຸກຢ່າງກໍຈົບລົງພຽງເທົ່ານັ້ນ. ປະມານໜຶ່ງເດືອນຫາກວ່າບໍ່ເຫັນຝ່າຍຍິງນໍາສິ່ງຂອງກັບມາຄືນຍາດພີ່ນ້ອງທາງຝ່າຍຊາຍຈະຕ້ອງນໍາໄກ່ໜຶ່ງຕົວກັບໄປຍັງເຮືອນຂອງຝ່າຍຍິງອີກເທື່ອໜຶ່ງເພື່ອສອບຖາມເອົາຄວາມກ່ຽວກັບວັນເວລາທີ່ຈະຈັດພິທີແຕ່ງດອງເຊິ່ງຮຽກວ່າ: "**ໄປຖາມປັ້ນເຂົ້າ**"ເຊິ່ງບາງຄົນອາດຈະໄປຖາມຫລາຍເທື່ອ ຈົນກວ່າຍາດພີ່ນ້ອງທາງຝ່າຍຍິງ ຈະຕົກລົງປົງໃຈຍອມໃຫ້ຈັດພິທີແຕ່ງດອງກັນ, ບາງຄົນຝ່າຍຊາຍຕ້ອງໄປຊ່ວຍເຮັດວຽກຢູ່ທາງເຮືອນຝ່າຍຍິງເປັນປີ ຫລືຫລາຍປີເພື່ອສະແດງຄວາມຈິງໃຈໃຫ້ຍາດພີ່ນ້ອງທາງຝ່າຍຍິງເຫັນ.

### 1.3 ການກ່າວ

ເມື່ອຜ່ານຂັ້ນຕອນການຖາມປັ້ນເຂົ້າແລ້ວ ກໍຈະເຂົ້າສູ່ຂັ້ນຕອນທີ່ຮຽກວ່າ: "ການກ່າວ" ເຊິ່ງເປັນການຕົກລົງກ່ຽວກັບເລື່ອງກໍານົດຄ່າສິນສອດ (ຄ່າດອງ) ແລະວັນເວລາໃນການຈັດພິທີແຕ່ງດອງໂດຍໃນການຕົກລົງກັນນີ້ຈະມີ "ພໍ່ລ່າມ" ເຮັດໜ້າທີ່ເປັນຕົວແທນຝ່າຍຊາຍ.ໃນການມາສູ່ຂໍນີ້ຝ່າຍຊາຍຈະຕ້ອງ

ທາງຫາກະກຽມຂັນຫມາກ, ພູ, ຢາສູບ, ເຂົ້າຕົ້ມ, ເຂົ້າຫນົມ ແລະ ເງິນຫນຶ່ງຂັນ. ໃນການມາສູ່ຂໍຍິງສາວໂດຍທົ່ວໄປຈະຮຽກວ່າ: "ໂອມສາວ" ໂດຍຈະມີ "ຫມໍແອ" ເປັນຄົນກາງໃນການໂອ້ລົມສົນທະນາກັນ ແລະຕົກລົງກັນ ເຊິ່ງຈະເລີ່ມຕົ້ນດ້ວຍການທີ່ຫມໍແອກ່າວຄຳໂອມກັບພໍ່ແມ່ຂອງຝ່າຍຍິງ, ຈາກນັ້ນເຈົ້າໂຄດທາງຝ່າຍຍິງ ຈະສອບຖາມຄວາມຕ້ອງການຄວາມຕົກລົງປົງໃຈຂອງຝ່າຍຊາຍ.ຈາກນັ້ນຈຶ່ງຮັບເອົາຂັນຫມາກ, ຂັນພູມາຄົຽວ ແລະ ຕົກລົງກັນເລື່ອງຄ່າດອງ ລວມເຖິງຫາເລີກງາມຍາມດີທີ່ຈະເຮັດພິທີແຕ່ງດອງຕາມທຳນຽມທີ່ ປະຕິບັດສືບຕໍ່ກັນມານັ້ນ ເຊິ່ງຄ່າດອງຈະຕ້ອງປະກອບດ້ວຍສິ່ງຂອງຕ່າງໆດັ່ງນີ້:

1. ເງິນຂັນ 5 ຂັນ.
2. ຫມູ 5 ໂຕ.
3. ເຫລົ້າໄຫໃຫຍ່ 1 ໄຫ.
4. ປອກຂາ ຫລືປອກແຂນ 1 ອັນ.

ນອກຈາກນີ້ອາດຈະມີງົວ ຫລືຄວາຍສຳລັບລ້ຽງແຂກທີ່ມາຮ່ວມໃນງານເຊິ່ງຂຶ້ນຢູ່ກັບຖານະຂອງຝ່າຍຊາຍທີ່ຈະຈັດຫາມາແຕ່ບໍ່ໄດ້ກຳນົດໄວ້ໃນຄ່າດອງ. ສຳລັບຫມູ 5 ໂຕຖືເປັນສິ່ງທີ່ສຳຄັນເຊິ່ງຈະຂາດບໍ່ໄດ້,ໂດຍຫມູໂຕທີ 1 ແມ່ນ ເພື່ອບູຊາຜີ

ເຮືອນ, ໝູໂຕທີ 2 ເພື່ອເຮັດ ຂວັນພໍ່ແມ່ຝ່າຍຍິງ, ໝູໂຕທີ 3 ເພື່ອຄົວກິນສຳລັບລ້ຽງເຈົ້າໂຄດທາງຝ່າຍຍິງ,ໝູ ໂຕທີ 4 ເພື່ອຄົວກິນສຳລັບລ້ຽງຍາດພີ່ນ້ອງຝ່າຍຍິງທີ່ຍັງບໍ່ໄດ້ແຕ່ງດອງ ແລະ ໝູໂຕທີ 5 ແມ່ນເພື່ອມອບໃຫ້ພໍ່ແມ່ທາງຝ່າຍຍິງເອົາໄປລ້ຽງ.

ເມື່ອໄດ້ກຳນົດມື້ທີ່ແນ່ນອນແລ້ວກໍຮຽກວ່າ "ການກ່າວ" ແຕ່ລະຝ່າຍກໍຈະຫາງຫາກະກຽມສິ່ງຂອງຕ່າງໆ ເພື່ອນຳໄປໃຊ້ໃນການປະກອບພິທີແຕ່ງດອງ, ເຊິ່ງແຕ່ກ່ອນນັ້ນແມ່ນຫລັງຈາກ "ກ່າວ" ແລ້ວຈະປະປ່ອຍເວລາປະມານສາມປີ ຈຶ່ງຈະຈັດພິທີແຕ່ງດອງກັນ, ອັນເນື່ອງມາຈາກ ຝ່າຍຍິງຕ້ອງກະກຽມປູກຝ້າຍ ແລະນຳມາປັ່ນເປັນເສັ້ນ ເພື່ອນຳມາທໍເປັນຜ້າເພື່ອຕັດຫຍິບເປັນສິ້ນ, ເສື້ອ, ປອກໝອນ, ຜ້າຫົ່ມ ແລະທີ່ຈະນຳໄປມອບໃຫ້ແກ່ຍາດພີ່ນ້ອງທາງຝ່າຍຊາຍ. ສ່ວນຝ່າຍຊາຍນັ້ນກໍຕ້ອງຫາງຫາກະກຽມລ້ຽງໝູຫລື ຊອກຫາງົວ, ຄວາຍ ແລະສິນສອດຕ່າງໆ ເພື່ອນຳໄປມອບໃຫ້ແກ່ຍາດພີ່ນ້ອງຂອງທາງຝ່າຍຍິງ ແລະກໍນຳໄປໃຊ້ໃນການຈັດພິທີແຕ່ງດອງ. ເມື່ອກະກຽມທຸກຢ່າງເປັນທີ່ຮຽບຮ້ອຍແລ້ວຈຶ່ງຈະຈັດພິທີແຕ່ງດອງໄດ້.(ແມ່ບຸນສອນສຳພາດ ເມື່ອວັນທີ 26 ສິງຫາ 2010 )

ນອກຈາກນີ້ໄທແດງຍັງມີພິທີກຳອີກຢ່າງໜຶ່ງທີ່ກ່ຽວກັບສິ້ນນຸ່ງທີ່ຮຽກວ່າ:"**ການຖາມສິ້ນ**"ເຊິ່ງເປັນທຳນຽບໃນການທາບທາມສາວໃນເທື່ອທຳອິດເພື່ອເບິ່ງທ່າທາງຂອງຝ່າຍຜູ້ສາວ.ການໄປຖາມສິ້ນນີ້, ຝ່າຍຊາຍຈະມີ "ພໍ່ເຈົ້" (ພໍ່ໃຊ້) ເປັນຜູ້ນຳພາຍາດພີ່ນ້ອງໄປຍັງເຮືອນຂອງຝ່າຍຍິງ ໂດຍມີເລື່ອງທີ່ຖາມປະກອບດ້ວຍສິ້ນ 2 ຜືນ, ໝາກຄ້ຽວ 2 ຫົວ, ມັດໜັງຫາດ ແລະ ມັດພູ ຢ່າງລະມັດ, ເກືອ 2 ທໍ່, ຜ້າຝ້າຍສີຂາວ 2 ວາ, ປອກແຂນເງິນ 1 ຄູ່ ແລະເຫລົ້າຂາວ 1 ແກ້ວ. ເຊິ່ງຜ້າສິ້ນເປັນເຄື່ອງຖາມທີ່ສຳຄັນເນື່ອງຈາກວ່າຖ້າຫາກຍາດພີ່ນ້ອງທາງຝ່າຍຍິງຕົກລົງຮັບເອົາເຄື່ອງຖາມແລ້ວ ແມ່ຂອງຝ່າຍຍິງກໍຈະເກັບເອົາຜ້າສິ້ນດັ່ງກ່າວໄປໄວ້ນຸ່ງແລະເມື່ອແມ່ຂອງຝ່າຍຍິງຮັບເອົາຜ້າສິ້ນມານຸ່ງແລ້ວລູກສາວກໍຈະບໍ່ສາມາດລົມ ຫລືຄົບຫາກັບຊາຍຄົນອື່ນໄດ້ອີກ ເຊິ່ງຖືວ່າມີຄູ່ຈັບຈອງໝັ້ນໝາຍແລ້ວ. (ວຽງຄຳ ມັນທະວົງດວງສີ.2006)

## 2. ກ່ອນການກິນດອງ

### 2.1 ຂັ້ນຕອນການກຽມກິນດອງ.

ສຳລັບຂັ້ນຕອນດັ່ງກ່າວນີ້ແມ່ນ ເລີ່ມຈາກກາງຄືນກ່ອນມື້ດອງກໍຈະມີຍາດພີ່ນ້ອງຂອງທາງຝ່າຍຍິງມາຊ່ວຍກັນຫ້າງຫາກະກຽມເຮັດວຽກງານທີ່ເຮືອນຂອງຝ່າຍຍິງ ເຊິ່ງຮຽກວ່າ "ອຸ່ນ

ດອງ"ແລະຕອນຮຸ່ງເຊົ້າມາທາງຝ່າຍຊາຍຈະນຳໝູ 5 ໂຕມາມອບໃຫ້ທາງຝ່າຍຍິງ, ໝູ 4 ໂຕຈະຖືກຂ້າເພື່ອເຮັດອາຫານແລະໃຊ້ປະກອບໃນພິທີກຳ. ພໍຕື່ນຮຸ່ງເຊົ້າເມື່ອຮອດເວລາອັນເປັນມົງຄຸນແລ້ວ, ຝ່າຍຊາຍຈະຍົກຂະບວນຂັນໝາກແຫ່ມາເຮືອນຂອງຝ່າຍຍິງຢ່າງເປັນຂະບວນຟົດຟື້ນ, ເມື່ອມາຮອດແລ້ວຈະມີຍາດພີ່ນ້ອງຝ່າຍຍິງມາຕ້ອນຮັບ ໂດຍຈະນຳເຫລົ້າມາເຫຍັ້ນໃຫ້ດື່ມ, ຈາກນັ້ນຜູ້ອາວຸໂສຂອງທາງຝ່າຍຊາຍຈະຖືກເຊີນຂຶ້ນເຮືອນແລະໃຫ້ເຈົ້າບ່າວລໍຖ້າຢູ່ທາງລຸ່ມຫລືລໍຖ້າຢູ່ນອກຮົ້ວ. ຈົນກວ່າຜູ້ອາວຸໂສທັງສອງຝ່າຍຈະກວດກາຄ່າດອງຮຽບຮ້ອຍແລ້ວຈິ່ງຈະໃຫ້ເຈົ້າບ່າວຂຶ້ນໄປເທິງເຮືອນໄດ້. ຈາກນັ້ນເຈົ້າບ່າວເຈົ້າສາວແລະຍາດພີ່ນ້ອງກໍຈະຍໍອາຫານທີ່ມີຕົ້ມໝູຈັດໃສ່ພາເຂົ້າ ແລະເອົາໄປວາງໄວ້ໃນຫ້ອງເຮືອນຜີເພື່ອເຮັດພິທີໄຫວ້ຜີເຮືອນ. ຈາກນັ້ນຈຶ່ງຍໍພາຂວັນອອກມາ ເຊິ່ງໃນພາຂວັນຈະປະກອບໄປດ້ວຍອາຫານຄາວຫວານ, ໄກ່ຕົ້ມ, ໝູຕົ້ມ, ເຄື່ອງນຸ່ງຫົ່ມຂອງຊາຍຍິງ.ເຊິ່ງໃນປັດຈຸບັນຈະມີເຄື່ອງປະກອບເພີ່ມຂຶ້ນອີກ ຄື: ໝາກເບັງ, ພານບາຍສີ, ຝ້າຍຜູກແຂນ, ເຄື່ອງນຸ່ງຫົ່ມ, ເຫລົ້າໄຫ, ໄກ່ຕົ້ມ, ເຫລົ້າຂາວ ແລະໄຂ່ຕົ້ມ.

ເມື່ອກຽມພາຂວັນຮຽບຮ້ອຍແລ້ວ "ໝໍໄລ" ຫລື "ໝໍອະ" ຈະເລີ່ມກ່າວຄຳສູ່ຂວັນ ແລະເມື່ອສິ້ນສຸດການສູ່ຂວັນແລ້ວ ທຸກຄົນທີ່ມາຮ່ວມງານກໍຈະໂອມພ້ອມກັບຍົກພາຂວັນຂຶ້ນ

ແລ້ວ ຈຶ່ງມີການຜູກແຂນ ແລະມອບເຄື່ອງສົມມາແກ່ຜູ້ເປັນພໍ່ແມ່ເຈົ້າໂຄດລຸງຕາທາງຝ່າຍຍິງຕາມລຳດັບ.ຈາກນັ້ນຈຶ່ງຍົກພາເຂົ້າມາລ້ຽງແຂກທີ່ມາຮ່ວມງານຖືວ່າເປັນອັນຮຽບຮ້ອຍ. ໃນການກິນລ້ຽງນັ້ນຈະມີໄປຈົນຕອນບ່າຍໂມງ,ຈາກນັ້ນຈະມີການເຄື່ອນຍ້າຍຂະບວນສົ່ງລູກໃພ້ໄປສູ່ເຮືອນປູ່ຍ່າ. ການທີ່ລູກໃພ້ຈະຍ້າຍໄປຢູ່ເຮືອນປູ່ຍ່ານັ້ນ ຈະຕ້ອງກະກຽມເຄື່ອງໃຊ້ຂອງຕົນໄປນຳພ້ອມເຊັ່ນ:

1. ໝອນເຕົ໊າ ເຊິ່ງເປັນໝອນສຳລັບໜຸນກ້ອງແຂນເປັນໝອນສີ່ຫລ່ຽມຂະໜາດໃຫຍ່, ເຊິ່ງທາງໃນບັນຈຸດອກເລົາຈຳນວນ 1 ອັນ.

2. ໝອນກິ່ງ ຄືໝອນຂະໜາດນ້ອຍສຳລັບໜຸນນອນດ້ານໜ້າຂອງໝອນຈະທັກແສ່ວດ້ວຍລວດລາຍເອ້ຍ້ອງຢ່າງສວຍງາມຈຳນວນ 10-20 ອັນ. ຂຶ້ນກັບຄວາມສາມາດຂອງຝ່າຍເຈົ້າສາວໃນການຈັດຫາມາ.

3. ຜ້າກັ້ງ ຄືຜ້າທັກແສ່ວທີ່ເຮັດຂຶ້ນເພື່ອເປັນຜ້າກັ້ນຫ້ອງ.

4. ມຸ້ງສີດຳຂອບສີແດງ ເຊິ່ງຂອບມຸ້ງທັກແສ່ວດ້ວຍແພສີແດງປະດັບລວດລາຍທີ່ສວຍງາມ.

5. ເສື່ອ ຫລືຜ້າປູບ່ອນນອນ.

6. ຟູກ ຫລືບ່ອນນອນ.

7. ເບາະຮອງນັ່ງ (ຜ້ານັ່ງ) ທາງດ້ານໜ້າຂອງເບາະ ປະດັບດ້ວຍຜ້າແພທັກແສ່ວລວດລາຍຕ່າງໆ.

8. ສິ້ນສຳລັບແມ່ ແລະຍາດພີ່ນ້ອງຂອງຝ່າຍເຈົ້າບ່າວ. ແລະ

9. ຜ້າແພ ສຳລັບຍາດພີ່ນ້ອງຝ່າຍຊາຍຂອງຝ່າຍເຈົ້າບ່າວ. (ສຸມິດ ປິຕິພັດ ແລະ ຄະນະ 2003)

ໃນຂະບວນສົ່ງລູກໃພ້ໄປເຮືອນປູ່ຍ່ານັ້ນຈະມີທັງຍາດພີ່ນ້ອງຂອງທາງຝ່າຍເຈົ້າບ່າວ ແລະຝ່າຍເຈົ້າສາວຮ່ວມຂະບວນໄປນຳ, ເມື່ອຮອດເຮືອນປູ່ຍ່າແລ້ວຈະຕ້ອງເຮັດພິທີໄຫວ້ຜີເຮືອນເຊັ່ນດຽວກັບທີ່ຢູ່ເຮືອນຂອງເຈົ້າສາວເສຍກ່ອນ.ຈາກນັ້ນຈຶ່ງຜູກແຂນຮັບຂວັນລູກໃພ້. ລູກໃພ້ຈະມອບຂອງສົມມາ ໃຫ້ແກ່ພໍ່ແມ່ ແລະເຈົ້າໂຄດລຸງຕາທາງຝ່າຍສາມີ ແລະໃນຂະນະດຽວກັນແມ່ຂອງສາມີກໍຈະມອບສິ່ງຂອງ ເພື່ອເປັນການຮັບຂວັນລູກໃພ້ເຊັ່ນດຽວກັນ. ພໍຮຽບຮ້ອຍແລ້ວຈຶ່ງ ຈັດຫາອາຫານມາລ້ຽງແຂກເປັນອັນສຳເລັດພິທີການແຕ່ງດອງດັ່ງກ່າວ.

ຕາມປະເພນີການແຕ່ງດອງຂອງໄທແດງ,ນອກຈາກສິ່ງຂອງທີ່ໄດ້ກ່າວມາຂ້າງຕົ້ນແລ້ວ ຍັງມີອີກ 1 ຢ່າງທີ່ຂາດບໍ່ໄດ້ນັ້ນກໍແມ່ນ ເຂົ້າຕົ້ມໜໍ່ ເຊິ່ງເຂົ້າຕົ້ມໜໍ່ນັ້ນຕ້ອງມັດຕິດກັນ ເປັນຄູ່ໂດຍບໍ່ແຍກອອກຈາກກັນ ແລະຈຳນວນເຂົ້າຕົ້ມໜໍ່ນັ້ນ ກໍໃຫ້ເປັນຈຳນວນຖ້ວນ ໄທແດງຖືວ່າຫາກເຂົ້າຕົ້ມທີ່ນຳໄປ ຍັງຝ່າຍຍິງນັ້ນເປັນຄູ່ ແລະເປັນຈຳນວນຖ້ວນຈະເຮັດໃຫ້ບ່າວສາວຕິດພັນກັນບໍ່ແຍກຈາກກັນ. ຈຳນວນເຂົ້າຕົ້ມຕ້ອງເປັນຄູ່ຕາມລຳດັບຄື: 2, 4, 6, 8, 10...ໂດຍຫ້າມ ເປັນ 1, 3, 5, 7, 9, 11, 13... ເປັນຕົ້ນ.

ເມື່ອຈັດພິທີແຕ່ງດອງລູກໃພ້ ຫລືລູກເຂີຍຈະຍ້າຍມາຢູ່ເຮືອນ ກັບສາມີ ແລະລູກໃພ້ກັບ ແມ່ຍ່າຈະບໍ່ໃຫ້ເຫັນໜ້າກັນ ໝາຍຄວາມວ່າ ແມ່ຍ່າຕ້ອງຫລົບໜ້າລູກໃພ້ຖ້າຫາກເຫັນໜ້າກັນແຕ່ຕອນທຳອິດຈະເຮັດໃຫ້ຖືກຖຽງກັນຕະຫລອດຊີວິດ. ເຊິ່ງຄືນທຳອິດທີ່ລູກໃພ້ມາຮອດ ເຮືອນຂອງສາມີນັ້ນ ແມ່ຍ່າຈະເປັນຄົນປູບ່ອນນອນໃຫ້ແກ່ລູກໃພ້ ແລະ ອະທິຖານວ່າຂໍໃຫ້ມີລູກເຕັມບ້ານມີຫລານເຕັມເມືອງເນີ.

ຫາກບ່າວສາວຮັກກັນ, ແຕ່ພໍ່ແມ່ບໍ່ເຫັນດີໃຫ້ແຕ່ງດອງ, ຜູ້ບ່າວຈະຊວນຜູ້ສາວມາຢູ່ເຮືອນເອງໂດຍບໍ່ໄດ້ສູ່ຂໍ ແລະເຈົ້າສາວຕ້ອງຍອມເສຍປຽບ. ເຊິ່ງໃນເວລາທີ່ຈະພາເຈົ້າສາວໜີມາ

ຢູ່ເຮືອນຂອງເຈົ້າບ່າວນັ້ນຈະເປັນເວລາກາງຄືນເຊິ່ງເພິ່ນຮຽກວ່າ ໄປລັກເພີ້ ຫລືເປີ້ ເຊິ່ງເຈົ້າບ່າວຈະເອົາເງິນຈຳນວນໜຶ່ງ ໄປ ວາງໄວ້ກົ້ນໝັ້ນໝຶ້ງ ຂອງເຮືອນເຈົ້າສາວ. ພໍຮອດຍາມຮຸ່ງເຊົ້າ ມາແລ້ວ, ແມ່ຂອງເຈົ້າສາວບໍ່ເຫັນລູກສາວຂອງຕົນເອງຕື່ນມາ ຫຸງເຂົ້າຕາມປົກກະຕິຈຶ່ງໄປເປີດເບິ່ງບ່ອນນອນແຕ່ບໍ່ເຫັນລູກສາວ ຂອງຕົນຢູ່ທີ່ນອນແລ້ວ ຈະເອົາໝັ້ນໝຶ້ງມາເບິ່ງ ຈຶ່ງເຫັນເງິນ ຈຳນວນໜຶ່ງວາງໄວ້ຢູ່ກົ້ນໝັ້ນໝຶ້ງນັ້ນ, ກໍເຂົ້າໃຈວ່າໄດ້ເລີຍວ່າ ລູກສາວຂອງຕົນໄດ້ຖືກລັກໄປແລ້ວ. ເຊິ່ງໃນເຊົ້າຂອງມື້ນັ້ນ ເອງ ຝ່າຍເຈົ້າບ່າວຈະຫາພໍ່ສື່ ຫລືພໍ່ລ່າມມາແຈ້ງຂ່າວກັບທາງ ພໍ່ແມ່ຂອງຝ່າຍສາວວ່າບັດນີ້, ດີບໍ່ດີ, ມັກຫລືບໍ່ມັກ ທາງພໍ່ແມ່ ເຈົ້າສາວກໍຕ້ອງຈຳເປັນໃຫ້ແຕ່ງດອງກັນ, ໂດຍເລື່ອງຄ່າສິນ ສອດນັ້ນ ແມ່ນຂຶ້ນກັບທາງຝ່າຍເຈົ້າບ່າວນຳມາໃຫ້ເທົ່າໃດກໍ ຕ້ອງຍອມ, ໂດຍບໍ່ມີສິດຈະເອີ່ຍຂໍກັບທາງຝ່າຍເຈົ້າບ່າວອີກເພາະ ຖືວ່າລູກສາວຂອງຕົນໄດ້ເສຍປຽບທາງຝ່າຍເຈົ້າບ່າວແລ້ວ. (ສຳພາດ ຄຳແກ້ວ ທະນະສຸນທອນ 2 ຕຸລາ2015)

### 2.2 ການກຽມເຄື່ອງໄປເຮືອນຜົວ.

ການກຽມເຄື່ອງຂອງໄປໃຫ້ຍາດພີ່ນ້ອງຂອງ

ຝ່າຍຊາຍນີ້ເພິ່ນຮຽກວ່າ:ກຽມເຄື່ອງໄປເຮືອນຜົວ. ເມື່ອເຈົ້າສາວ ມອບສິ້ນ ໃຫ້ແມ່ເຈົ້າບ່າວເປັນທີ່ຮຽບຮ້ອຍແລ້ວ, ທາງແມ່ເຈົ້າ

ບ່າວກໍ ຈະມອບສິ້ນທີ່ຕົນເອງກຽມໄວ້ເປັນການຮັບລູກໃພ້ເຊັ່ນດຽວກັນ.

ປະເພນີການແຕ່ງດອງຂອງໄທແດງເປັນການແຕ່ງດອງທີ່ເຈົ້າສາວຕ້ອງຍ້າຍໄປຢູ່ກັບສາມີ, ໂດຍຕ້ອງຕັດການສືບສາຍສຳພັນທາງເຄືອຍາດຈາກຄອບຄົວເດີມຂອງຕົນເອງຮວມທັງ ຜີບັນພະບຸລຸດທີ່ຕົນເຄີຍນັບຖື, ແລ້ວກາຍເປັນສະມາຊິກໃຫມ່ຂອງເຄືອຍາດຝ່າຍຊາຍຮ່ວມກັນ ກັບການນັບຖືຜີບັນພະບຸລຸດຂອງຝ່າຍຊາຍນຳອີກດ້ວຍ.

## 2.3 ການແບ່ງມໍລະດົກ.

ສຳຫລັບການແບ່ງປັນມໍລະດົກ ຕາມປະເພນີການແຕ່ງດອງຂອງໄທແດງແລ້ວ, ຫລັງຈາກແຕ່ງດອງແລ້ວ ຝ່າຍຍິງຕ້ອງໄປຢູ່ເຮືອນຂອງສາມີ ເຮັດໃຫ້ລູກສາວບໍ່ມີສິດໄດ້ຮັບມໍລະດົກຈາກພໍ່ແມ່ຂອງຕົນ, ແຕ່ຈະໄດ້ຮັບຈາກທາງພໍ່ແມ່ຂອງທາງຝ່າຍສາມີ,ສ່ວນມໍລະດົກຂອງພໍ່ແມ່ຈະຕົກຢູ່ກັບລູກຊາຍ ໂດຍສະເພາະລູກຊາຍທີ່ເບິ່ງແຍງພໍ່ແມ່ຈົນເຖິງວາລະສຸດທ້າຍເຊິ່ງຈະເປັນຜູ້ໄດ້ຢູ່ເຮືອນ ແລະໄດ້ຮັບທີ່ດິນໃນປະລິມານທີ່ຫລາຍກວ່າທຸກຄົນເຊິ່ງສອດຄ້ອງກັບທີ່ (ສະຫງ່າ ກຸສິຫາລາດ2005) ທີ່ໄດ້ກ່າວໄວ້ວ່າທຳນຽມການສືບທອດມໍລະດົກຂອງໄທແດງ ສ່ວນຫຼາຍເມື່ອແຕ່ງດອງແລ້ວ ຈະເອົາໃພ້ກັບໄປຢູ່ເຮືອນປູ່ຍ່າ ລູກຊາຍ

ຈະສືບທອດມໍລະດົກພໍ່ແມ່ຂອງຕົນ, ສ່ວນຝ່າຍຍິງຈະໄປຮັບມໍລະດົກກັບຝ່າຍສາມີ ແລະເຂົ້າຮີດຜີທາງຝ່າຍສາມີ, ຖ້າຄອບຄົວມີລູກຊາຍຫລາຍຄົນລູກຊາຍກົກຈະຢູ່ສືບເຮືອນແທນພໍ່ແມ່ ແລະໃນທຳນອງດຽວກັນ ສຸມິດ ປິຕິພັດ ແລະຄະນະ (2003) ກໍໄດ້ກ່າວເຖິງສັງຄົມຂອງໄທແດງວ່າມີລະບົບຄວາມສຳພັນທາງສັງຄົມທີ່ສຳຄັນຄື ລະບົບເຄືອຍາດໂດຍໄທແດງຈະໃຫ້ຄວາມສຳຄັນກັບຕະກູນຝ່າຍຊາຍເປັນຫລັກ. ດັ່ງນັ້ນ, ເມື່ອແຕ່ງດອງແລ້ວຝ່າຍຍິງຕ້ອງປ່ຽນມານັບຖືຜີປະຈຳຕະກູນຂອງຝ່າຍຊາຍ ແລະຜູ້ທີ່ຈະສືບທອດຜີປະຈຳຕະກູນໄດ້ຕ້ອງເປັນຜູ້ຊາຍເທົ່ານັ້ນ.ເຊິ່ງໃນລະບົບເຄືອຍາດຂອງໄທແດງມີກຸ່ມເຊື້ອສາຍທີ່ຮຽກວ່າ "ຈາວ" ທີ່ສຳຄັນຄື ຈາວລົກ, ຈາວລື, ຈາວເລືອງ ແລະຈາວຄວາງ.

ຕາມທຳນຽມໄທແດງສ່ວນຫລາຍ ເມື່ອແຕ່ງດອງແລ້ວຈະເອົາໃພ້ໄປຢູ່ເຮືອນກັບປູ່ຍ່າ.ລູກຊາຍຈະສືບທອດມໍລະດົກຂອງພໍ່ແມ່ຕົນເອງ, ສ່ວນຝ່າຍຍິງຈະໄປຮັບມໍລະດົກກັບຝ່າຍສາມີແລະເຂົ້າຮີດຖືຜີທາງຝ່າຍສາມີ.ຖ້າຄອບຄົວມີລູກຊາຍຫລາຍຄົນ, ລູກຊາຍແຕ່ລະຄົນກໍຕ້ອງເອົາລູກໃພ້ມາລ້ຽງປູ່ຍ່າເຊັ່ນດຽວກັນ. ແຕ່ຖ້າຫາກມີລູກຊາຍ ແລະລູກສາວ, ລູກຊາຍກົກຈະຢູ່ເຮືອນເພື່ອສືບແທນພໍ່ແມ່ ແຕ່ຖ້າມີການເຈັບປ່ວຍເກີດຂຶ້ນກັບສະມາຊິກໃນຄອບຄົວ ຫລືໃນຫມູ່ບ້ານໄທແດງຈະອາໄສຫມໍໄສຍະສາດ ເຊັ່ນ: ຫມໍອະ, ຫມໍແອ, ຫມໍໄລ່, ຫມໍມົນ, ຫມໍດູ, ຫມໍເຢົາ,

ເພື່ອໃຫ້ມາຊ່ວຍກວດຫາສາເຫດຂອງການເຈັບປ່ວຍ ແລະ ຫາທາງຮັກສາປິ່ນປົວ. ຄົນໄທແດງມັກຈະເຊື່ອວ່າອາການເຈັບປ່ວຍນັ້ນເກີດຈາກການກະທຳຂອງຜີ ເຊິ່ງຄວາມເຊື່ອເລື່ອງຜີນັ້ນເປັນຄວາມເຊື່ອດັ້ງເດີມມາແຕ່ອະດີດ ແລະ ຜີທີ່ມີຄວາມສຳຄັນຕາມຄວາມເຊື່ອຂອງ ໄທແດງນັ້ນກໍຄື: ຜີບັນພະບຸລຸດ ເຊິ່ງອາດຈຳແນກເປັນຜີເຮືອນແລະຜີມະເຫສັກຫລັກບ້ານຫລືຜີເມືອງ. ນອກນັ້ນກໍຈະເປັນຜີທີ່ຢູ່ໃນທຳມະຊາດ ເຊັ່ນ: ຜີປ່າ, ຜີດົງ, ຜີນ້ຳ, ຜີພູເຂົາ ເຫລົ່ານີ້ເປັນຕົ້ນ. (ສະຫງ່າ ກຸສີຫາລາດ. 2005)

ເຖິງຢ່າງໃດກໍຕາມ, ລູກສາວນັ້ນຈະໄດ້ຮັບມໍລະດົກບາງສ່ວນຈາກພໍ່ແມ່ໃນເວລາທີ່ຈະອອກເຮືອນໄປຢູ່ກັບສາມີ ໂດຍມັກຈະເປັນເງິນ, ເຄື່ອງປະດັບເອ້ຍ້ອງ,ສິ່ງຂອງມີຄ່າລວມໄປເຖິງສັດລ້ຽງເຊັ່ນ: ໝູ, ງົວ ຫລື ຄວາຍ ເປັນຕົ້ນ. ສ່ວນຈະໜ້ອຍຫລືຫລາຍເທົ່າໃດນັ້ນແມ່ນຂຶ້ນ ຢູ່ກັບຖານະຄອບຄົບຂອງພໍ່ແມ່.

ເຖິງແມ່ນວ່າຕາມທຳນຽມຂອງໄທແດງນັ້ນ ເມື່ອຜູ້ຍິງແຕ່ງດອງແລ້ວຈະຕ້ອງຍ້າຍໄປຢູ່ເຮືອນຂອງຝ່າຍສາມີ, ແຕ່ກໍມີບາງກໍລະນີທີ່ຝ່າຍຊາຍຍ້າຍໄປຢູ່ເຮືອນຂອງຝ່າຍຍິງກໍມີດັ່ງນີ້:

ເຂີຍສູ່ຕານ ຄືຄອບຄົວຝ່າຍຍິງມີນ້ອງຊາຍທີ່ຍັງນ້ອຍຢູ່ແລະຈະຕ້ອງໃຫ້ຝ່າຍຊາຍໄປຢູ່ບ້ານຂອງຝ່າຍຍິງ ເພື່ອໄປຊ່ວຍ

ເຮັດວຽກຕ່າງໆເຊິ່ງຂຶ້ນກັບທັງສອງຝ່າຍຈະຕົກລົງກັນວ່າຈະໃຫ້ຝ່າຍຊາຍຢູ່ເຮືອນຝ່າຍຍິງດົນປານໃດ ແລະເມື່ອຄົບກຳນົດແລ້ວ, ຝ່າຍຊາຍກໍຈະກັບມາຢູ່ເຮືອນຂອງຕົນເອງພ້ອມກັບນຳເອົາເມຍມານຳເຊິ່ງຝ່າຍຍິງຈະຕ້ອງປ່ຽນການນັບຖືຜີມານັບຖືທາງຝ່າຍຊາຍ.

ເຂີຍສູ່ຂາດ ຄືຝ່າຍຊາຍຍ້າຍໄປຢູ່ເຮືອນຂອງຝ່າຍຍິງເປັນການຖາວອນ ແລະຕ້ອງປ່ຽນມານັບຖືຜີບັນພະບຸລຸດ ຂອງຝ່າຍຍິງພ້ອມ ເພື່ອເປັນຜູ້ສືບທອດຜີບັນພະບຸລຸດແທນຜູ້ເປັນພໍ່ເຖົ້າເຊິ່ງເຂີຍສູ່ຂາດນີ້ຈະເກີດຂຶ້ນໃນກໍລະນີ ທີ່ຄອບຄົວທາງຝ່າຍຍິງມີລູກສາວພຽງຄົນດຽວ ຫລືມີແຕ່ລູກສາວລ້ວນ ເຊິ່ງຈຳເປັນຕ້ອງໃຫ້ລູກເຂີຍໄປສືບເຮືອນ. ໃນກໍລະນີນີ້ຝ່າຍຍິງຈະຮັບຜິດຊອບຄ່າດອງທັງຫມົດເລີຍ. ( ສຳພາດທ່ານບຸນສີ ບຸນວີໄວ 29 ສິງຫາ 2010)

ໃນກໍລະນີເຂີຍສູ່ນັ້ນພໍ່ແມ່ທາງຝ່າຍຍິງຈະນຳເອົາເງິນຮຽກວ່າ "ເງິນລູກເງິນເຕົ້າ" ໄປໃຫ້ແກ່ພໍ່ແມ່ຝ່າຍຊາຍ. ໄທແດງ ມີຂໍ້ຫ້າມໃນການແຕ່ງດອງຄື: ຫ້າມແຕ່ງດອງກັບຜູ້ທີ່ພໍ່ແມ່ຫລື ພີ່ນ້ອງທີ່ນັບຖືຜີໃນສາຍຕະກູນດຽວກັນ (ສຸມິດ ປິຕິພັດ ແລະ ຄະນະ, 2003)

ລັກສະນະຄອບຄົວຂອງໄທແດງນັ້ນ ເປັນຄອບຄົວແບບຂະຫຍາຍ ແລະ ເປັນຄອບຄົວທີ່ມີຂະໜາດໃຫຍ່ໂດຍໃນເຮືອນຫລັງໜຶ່ງ ຈະປະກອບໄປດ້ວຍພໍ່ແມ່ຜູ້ເປັນເຈົ້າເຮືອນ ແລະມີຄອບຄົວຍ່ອຍຂອງລູກຊາຍແຕ່ລະຄົນ ທີ່ໄດ້ເຂົ້າມາອາໄສຢູ່ຮ່ວມກັນເຮັດໃຫ້ສະມາຊິກໃນເຮືອນມີຈຳນວນຫລາຍ ແລະ ມີຫລາຍຮຸ່ນອາຍຸອາໄສຢູ່ ເຊິ່ງເຮັດໃຫ້ເກີດສາຍພົວພັນທີ່ແໜ້ນແຟ້ນເປັນຢ່າງດີ. ຖ້າຫາກວ່າຈຳນວນສະມາຊິກຫລາຍເກີນໄປຈົນບໍ່ສາມາດທີ່ຈະຢູ່ໃນເຮືອນພໍ່ແມ່ຫລັງດຽວກັນໄດ້, ລູກຊາຍກໍຈະເປັນຜູ້ແຍກອອກໄປສ້າງເຮືອນໃໝ່ທີ່ຢູ່ໃກ້ໆ ກັບບໍລິເວນເຮືອນຂອງພໍ່ແມ່ ແລະຫາກມີການແຍກເຮືອນຂອງລູກຄົນຕໍ່ໆໄປກໍຈະປຸກເຮືອນຢູ່ອ້ອມຮອບເຮືອນຂອງພໍ່ແມ່ນັ້ນເອງແລະກໍຍັງຖືວ່າ ເປັນສະມາຊິກໃນຄອບຄົວດຽວກັນ ເຖິງແມ່ນວ່າຈະຢູ່ເຮືອນຄົນລະຫລັງກໍຕາມ.

ເຖິງຢ່າງໃດກໍຕາມ, ຈາກການໃຫ້ສຳພາດຂອງທ່ານບຸນພອນ ຈ່າວວີ 26 ສິງຫາ2010 ເຊິ່ງເປັນນາຍບ້ານ ບ້ານສົບຮາວ ເມືອງສົບເບົາ ແຂວງຫົວພັນໄດ້ກ່າວວ່າ: ສະພາບໃນປັດຈຸບັນນີ້, ປະເພນີການແຕ່ງດອງຂອງໄທແດງທີ່ບ້ານດັ່ງກ່າວ ແມ່ນມີຄວາມປ່ຽນແປງໄປຫລາຍ ອາດເປັນເພາະສັງຄົມມີການພັດທະນາຫລາຍຂຶ້ນ. ດັ່ງນັ້ນຄົນໄທແດງກໍມີການປັບປ່ຽນໃຫ້ມັນສອດຄ້ອງກັບສະພາບສັງຄົມຕົວຈິງໃນປັດຈຸບັນ

ຕົວຢ່າງການແຕ່ງດອງຂອງໄທແດງ ປັດຈຸບັນນີ້ແມ່ນມີຄວາມຄ້າຍຄືກັນການແຕ່ງດອງຂອງລາວພຸດ ຫລືລາວລຸ່ມຫລາຍຢ່າງ ເຊັ່ນ: ການແຕ່ງຕົວ ຫລືຊຸດເຈົ້າບ່າວເຈົ້າສາວທີ່ນຸ່ງຖືກໍແມ່ນແຕ່ງຕາມແບບຂອງລາວລຸ່ມເປັນສ່ວນຫລາຍ, ການສູ່ຂໍກໍເຫັນວ່າປ່ຽນໄປຕາມແບບລາວລຸ່ມຫລາຍ, ປັດຈຸບັນບໍ່ຕ້ອງມີພໍ່ລ່າມໄປລົມ ຫລືໄປກ່າວໃຫ້ພຽງແຕ່ມີເຈົ້າໂຄດລຸງຕາ ຫລືພໍ່ແມ່ຂອງທັງສອງກໍ້າສອງຝ່າຍເຫັນດີກໍແມ່ນວ່າຕົກລົງ ແລະກໍຈັດພິທີກິນດອງຫລືແຕ່ງດອງໄດ້ເລີຍ. ນອກຈາກນີ້ກໍຍັງມີການຈັດອາຫານໂຕະຈີນແບບລາວລຸ່ມນຳອີກ ແລະກໍຍັງນຳວົງດົນຕີມາເສບເພື່ອສ້າງຄວາມມ່ວນຊື່ນໃຫ້ແກ່ແຂກຜູ້ກຽດ ທີ່ໄດ້ມາຮ່ວມສະແດງຄວາມຍິນດີກັບທັງສອງຝ່າຍ.

ລັກສະນະສຳພັນດັ່ງກ່າວນີ້ມັນໄດ້ສອດຄ້ອງກັບ ສຸເທບ ສຸນທອນເພສັດ (2005)ໄດ້ກ່າວໂດຍສະຫລຸບວ່າ: ປະກົດການທາງສັງຄົມວັດທະນະທຳທີ່ແພ່ຫລາຍໂດຍທົ່ວໄປ ທັງໃນອະດີດ ແລະປັດຈຸບັນຈະເຫັນວ່າ: ຫມູ່ບ້ານ, ຄະນະຊົນ, ເຜົ່າພັນ ຕະຫລອດຈົນຊຸມຊົນທີ່ ຄັ້ງຫນຶ່ງເຄີຍໂດດດ່ຽວ ແລະມີຄວາມເປັນຢູ່ຢ່າງອິດສະຫລະໄດ້ກາຍມາເປັນສ່ວນຫນຶ່ງຂອງລັດຊາດທີ່ເກີດຂຶ້ນໃຫມ່ເປັນກຸ່ມຊາດພັນ (Ethnic Groups) ເຊິ່ງແຕ່ລະກຸ່ມຈະມີຄວາມແຕກຕ່າງໃນຂອບເຂດທີ່ຕ່າງກັນອອກໄປທ່າມກາງການປ່ຽນແປງທາງສັງຄົມ, ວັດທະນະທຳຈະເຫັນວ່າມີກຸ່ມຊາດ

ພັນຈຳນວນໜຶ່ງພະຍາຍາມທີ່ຈະປັບຕົວໃຫ້ເຂົ້າກັບສະພາບຄວາມເປັນຈິງທີ່ເກີດຂຶ້ນໃໝ່ໄດ້ມີການຍອມຮັບຈາຮີດປະເພນີຂອງຊົນກຸ່ມອື່ນປັບຕົວເຂົ້າມາເປັນສ່ວນໜຶ່ງຂອງລັດເຊິ່ງຕ່າງກໍສູນເສຍຄວາມແຕກຕ່າງທາງສັງຄົມວັດທະນະທຳຂອງຕົນໄປຢ່າງໄວວາ; ໃນຂະນະດຽວກັນກໍມີກຸ່ມຊາດພັນຈຳນວນໜຶ່ງທີ່ພະຍາຍາມດຳລົງຄວາມເປັນອັດຕະລັກ ແລະຄວາມແຕກຕ່າງທາງຊາດພັນຂອງຕົນໄວ້.

**ສະຫລຸບ.**

ປະເພນີການແຕ່ງດອງຂອງໄທແດງ ບ້ານສົບຮາວ ເມືອງສົບເບົາ ແຂວງຫົວພັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ເປັນປະເພນີທີ່ປະຕິບັດ ແລະສືບທອດກັນມາຢ່າງຍາວນານ, ເປັນປະເພນທີ່ມີຄວາມເປັນເອກະລັກສະເພາະຕົນ, ເຊິ່ງແມ່ຍິງໄທແດງເມື່ອແຕ່ງດອງແລ້ວຈະຕ້ອງຍ້າຍເຂົ້າໄປຢູ່ເຮືອນຂອງສາມີແລະຕັດການນັບຖືຜີບັນພະບຸລຸດທີ່ຕົນເຄີຍນັບຖືໄປນັບຖືຜີບັນພະບຸລຸດທາງຝ່າຍສາມີແທນ. ດັ່ງນັ້ນ,ໜ້າທີ່ທຸກຢ່າງຈຶ່ງຕົກໄປຢູ່ຜູ້ເປັນລູກເປີ້ ຫລືລູກໃພ້ເປັນຄົນດູແລທຸກຢ່າງ, ລວມໄປເຖິງການບົວລະບັດສາມີຂອງຕົນ, ດັ່ງນັ້ນ ຈຶ່ງເຮັດໃຫ້ແມ່ຍິງຂອງໄທແດງຈຶ່ງເປັນຄົນທີ່ມີຄວາມດຸໝັ່ນຂະໜັນພຽນ ແລະມີຄວາມອົດທົນຫລາຍ.

ຜູ້ຂຽນຈຶ່ງເຫັນວ່າ ປະເພນີການແຕ່ງດອງຂອງໄທແດງ ທີ່ບ້ານສິບຮາວ ເມືອງສິບເບົາ ແຂວງຫົວພັນ ກໍໄດ້ມີການປ່ຽນແປງໄປຕາມສະພາບຂອງສັງຄົມ ແລະ ວັດທະນະທຳຕາມແບບລາວລຸ່ມຫລາຍຂຶ້ນ, ອາດເປັນຍ້ອນໄທແດງໄດ້ຮັບອິດທິພົນໃນວັດທະນະທຳການແຕ່ງດອງດັ່ງກ່າວທີ່ບໍ່ຊັບຊ້ອນ ແລະບໍ່ຫລາຍຂັ້ນຕອນ, ບໍ່ສິ້ນເປືອງ ແລະ ໃຊ້ເວລາບໍ່ດົນກວ່າແຕ່ກ່ອນ. ຈາກເມື່ອກ່ອນນັ້ນ, ກ່ອນທີ່ຈະແຕ່ງດອງໄທແດງຕ້ອງມີພິທີການຫລາຍຂັ້ນຕອນດັ່ງທີ່ໄດ້ກ່າວມາຂ້າງເທິງ,ແຕ່ວ່າການແຕ່ງດອງຂອງໄທແດງໃນປັດຈຸບັນນີ້ ກໍຈະມີລັກສະນະແບບລາວ ເຊັ່ນວ່າ ຖ້າບ່າວສາວຮັກມັກກັນແລ້ວ, ບ່າວສາວກໍຈະບອກ ກັບພໍ່ແມ່ຂອງທັງສອງວ່າທັງສອງຄົນຕ້ອງການທີ່ຈະສ້າງຄອບຄົວ ເພື່ອຄວາມຖືກຕ້ອງຕາມຮີດຄອງປະເພນີ. ດັ່ງນັ້ນ,ທາງຍາດພີ່ນ້ອງທັງສອງຝ່າຍກໍມີການໄປຈະພົບປະໂອ້ລົມກັນກ່ອນ ແລະຕົກລົງກັນກ່ຽວກັບເລື່ອງຄ່າດອງ ຫລື ສິນສອດ ເຊິ່ງປັດຈຸບັນນີ້ສ່ວນຫລາຍຄ່າດອງແມ່ນຂຶ້ນກັບຖານະ ແລະເສດຖະກິດຂອງຄອບຄົວທາງຝ່າຍຊາຍ, ເລື່ອງອາຫານການກິນຕ່າງໆ ແລະພ້ອມດ້ວຍເຄື່ອງຂອງທີ່ຈະນຳໄປມອບ ໃຫ້ແກ່ຍາດພີ່ນ້ອງຂອງທັງສອງຝ່າຍໃນມື້ງານກິນດອງ. ຈາກນັ້ນກໍມີການຫາເລີກງາມຍາມດີທີ່ຈະເປັນມື້ມົງຄົນໃນການສ້າງຄອບຄົວຂອງບ່າວສາວທັງສອງ, ເຊິ່ງຈະປະເວລາໄວ້ບໍ່ດົນ. ສຳລັບເລື່ອງການຈັດອາຫາ

ໃນພິທີແຕ່ງດອງກໍຈະມີລັກສະນະແບບລາວ ເປັນສ່ວນຫລາຍ ແລ້ວເຊັ່ນຈະຈັດເປັນແບບໂຕະຈີນ ແລະອາຫານທີ່ນຳມາໃຫ້ແກ່ແຂກທີ່ເຂົ້າມາຮ່ວມໃນງານດອງນັ້ນກໍຈະມີລາບໝູ ຫລືລາບຄວາຍ, ມີແກງ, ລວກຜັກ, ອົບຄວາຍ, ແຈ່ວເພັຍເຊິ່ງອາຫານແຕ່ລະຢ່າງທີ່ເວົ້າມານັ້ນ ແມ່ນຂຶ້ນກັບຄວາມຕ້ອງການຂອງທັງສອງຝ່າຍ, ແລະທີ່ສຳຄັນໄປກວ່ານັ້ນ ກໍຍັງມີດົນຕີອີເລັກໂທນທີ່ມາເສບເພື່ອສ້າງຄວາມມ່ວນຊື່ນ ໃຫ້ແກ່ແຂກທີ່ເຂົ້າມາຮ່ວມງານໃນ ແລະຍັງເປັນການສ້າງສານສຳພັນລະຫວ່າງ ໄທແດງດ້ວຍກັນ ແລະຍັງເຊື່ອມສຳພັນໄປເຖິງກຸ່ມຊົນອື່ນທີ່ໄດ້ເຂົ້າໄປຮ່ວມງານພິທີທີ່ສຳຄັນ ດັ່ງກ່າວອີກດ້ວຍ.

ດັ່ງນັ້ນ,ບໍ່ວ່າຈະເປັນປະເພນີການແຕ່ງດອງຂອງໄທແດງເອງ, ຫລື ແມ່ນແຕ່ປະເພນີການແຕ່ງດອງຂອງລາວພຸດເອງກໍຕາມ ມັນກໍບໍ່ມີຂໍ້ຈຳກັດກ່ຽວກັບປະເພນີດັ່ງກ່າວ, ເພາະວ່າເມື່ອສັງຄົມມີການປ່ຽນແປງ, ປະເພນີກໍ່ປ່ຽນໄປຕາມຄວາມສະດວກຄວາມພໍພຽງໃນສັງຄົມທີ່ສາມາດຫາມາໄດ້ແບບງ່າຍດາຍ ແລະບໍ່ເສຍເວລາຫລາຍແລະທີ່ສຳຄັນບໍ່ຊັບຊ້ອນນຳອີກ. ດັ່ງນັ້ນຈຶ່ງເຮັດໃຫ້ປະເພນີການແຕ່ງດອງຂອງໄທແດງທີ່ບ້ານສິບຮາວເມືອງສິບເບົາ ແຂວງຫົວພັນໃນປັດຈຸບັນນັ້ນ ປ່ຽນແປງໄປຕາມສັງຄົມແລະສະພາບແວດລ້ອມຮອບຂ້າງແລະເປັນການຍາກທີ່ຈະເຫັນພິທີກຳດັ່ງທີ່ຂ້າພະເຈົ້າໄດ້ສະເໜີມາຂ້າງເທິງນັ້ນ, ແຕ່ອາດ

ຈະມີບາງຂັ້ນຕອນເທົ່ານັ້ນທີ່ຍັງປະລະບໍ່ໄດ້ ເຊັ່ນ: ເຮົາຕ້ອງນຳເອົາສິ່ງຂອງໄປໄຫວ້ຜີບ້ານຜີເຮືອນສາກ່ອນ, ເຊິ່ງອັນນີ້ແມ່ນຍັງຄົງຮັກສາໄວ້ໄດ້ຢູ່ຄືເກົ່າ. ແຕ່ສຳລັບຂັ້ນຕອນອື່ນນັ້ນ ແມ່ນສ່ວນຫລາຍກໍປ່ຽນແປງໄປເປັນແບບລາວພຸດເປັນສ່ວນ ຫລາຍແລ້ວ. ເພາະວ່າສິ່ງຂອງຫລາຍຢ່າງເຮົາກໍສາມາດຫາຊື້ໄດ້ຕາມຕະຫລາດຂາຍສິນຄ້າທົ່ວໄປໄດ້ ແລະສິ້ນນຸ່ງຖືທີ່ທາງຝ່າຍຍິງຈະຕ້ອງນຳເອົາໄປມອບໃຫ້ແກ່ທາງຝ່າຍຊາຍນັ້ນ, ພວກເຂົາກໍຫາຊື້ຕາມຕະຫລາດກໍໄດ້, ເຊິ່ງບໍ່ເຫມືອນກັບສະໄຫມກ່ອນ, ຕ້ອງກຽມຕ່ຳຫູກທໍ່ຜ້າເປັນຫລາຍຈົນກວ່າຜ້າສິ້ນນັ້ນຈະຕ່ຳຮຽບຮ້ອຍແລ້ວຈຶ່ງຄ່ອຍນຳໄປມອບໃຫ້ແກ່ທາງຝ່າຍຊາຍ.

ຢ່າງໃດກໍຕາມການອາໄສຢູ່ຮ່ວມກັບກຸ່ມຊົນອື່ນ ເຮັດໃຫ້ໄທແດງບ້ານສົບຮາວ ເມືອງສົບເບົາ ແຂວງຫົວພັນ ມີການປະສົມປະສານກັນທາງດ້ານປະເພນີແລະວັດທະນະທຳ, ໂດຍສະເພາະ ວັດທະນະທຳຂອງລາວພຸດ ຫລືລາວລຸ່ມໄດ້ມີການຕິດຕໍ່ພົວພັນຊື້ຂາຍກັບສັງຄົມພາຍນອກ, ດັ່ງນັ້ນຈຶ່ງເຮັດໃຫ້ມີການປະສານກັບວັດທະນະທຳຂອງລາວພຸດ, ເມື່ອພຸດທະສາສະໜາເປັນສາສະໜາຫລັກ ແລະໄດ້ຮັບການສົ່ງເສີມເພື່ອລວມຄວາມເປັນຊາດລາວໂດຍ ສະເພາະແມ່ນຕັ້ງແຕ່ປີ1975 ເປັນຕົ້ນມາ. ໃນຂະນະທີ່ສາສະໜາຜີ ຫລື ຄວາມເຊື່ອ ເລື່ອງຜີຂອງໄທແດງບໍ່ໄດ້ຮັບການຍອມຮັບຈາກສະຖາບັນຕ່າງໆ ສິ່ງນີ້ເອງຈຶ່ງກໍ່ໃຫ້

ເກີດການປະສົມປະສານກັບວັດທະນະທຳອື່ນ, ໂດຍສະເພາະວັດທະນະທຳລາວ, ເຮັດໃຫ້ໄທແດງທີ່ເປັນຄົນຮຸ້ນໃໝ່ມີຄວາມພະຍາຍາມ ທີ່ຈະພັດທະນາຄວາມຄິດເລື່ອງອັດຕະລັກທາງຊາດພັນ ເພື່ອໃຫ້ມັນສອດຄ້ອງກັບນະໂຍບາຍຄວາມເປັນຊາດລາວ. ສິ່ງນີ້ເອງທີ່ຈຶ່ງເຮັດໃຫ້ໄທແດງມີຄວາມພະຍາຍາມປັບຕົວໃຫ້ເຂົ້າກັບສັງຄົມພາຍນອກ ເພື່ອຍົກສະຖານະພາບທາງສັງຄົມ ແລະວັດທະນະທຳຂອງຕົນເອງ ໃຫ້ທຽບເທົ່າກັບວັດທະນະທຳຂອງລາວພຸດໃນຖານະ ທີ່ເປັນປະຊາ ກອນຂອງລັດຊາດຂອງລາວ, ດັ່ງນັ້ນ ມັນຈຶ່ງສົ່ງຜົນໃຫ້ເກີດການປັບຕົວທາງດ້ານວັດທະນະທຳຈາກໄທແດງແບບດັ້ງເດີມໄປເປັນແບບລາວພຸດ ຫລືລາວລຸ່ມໃນໄລຍະຕໍ່ມາ.

## ເອກະສານອ້າງອີງ

ຄຳແກ້ວ ທະນະສຸນທອນ. (2015).ໄທແດງບ້ານ ນາຈຽງ, ເມືອງ ກວານຮວາ ແຂວງແທງຮວາ.ສຳພາດເມື່ອວັນທີ 2 ຕຸລາ.

ສະຫງ່າ ກຸສີຫາລາດ. (2005). **ວິຖີຊີວິດຂອງຊົນເຜົ່າໄຕ**

**ບ້ານນາແປ, ໜອງອໍ້ ເມືອງຄໍາເກີດ ຫລັກ20 ແຂວງບໍລິຄໍາໄຊ**. ວຽງຈັນ: ນໍລະດິກລ້ານຊ້າງ, ສະບັບທີ 6.

ສຸມິດ ປິຕິພັດ ແລະຄະນະ.(2003)**ຄົນໄທແດງ ໃນແຂວງ ຫົວພັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**.ກຸງເທບ:ໂຮງພິມໂອ.ເອສ.ພຣິ້ນຕິ້ງເຮົ້າ.

ສຸເທບ ສຸນທອນເພສັດ.(2005)**ຊາດພັນສໍາພັນ.** ກຸງເທບ: ດ່ານສຸດທາການພິມ.

ລາຊັນ ນິລະວັນນາພາ. (2010) **ອັດຕາລັກຜູ້ໄທແດງ ບ້ານ ສິບຣາວ ແຂວງຫົວພັນ ສາທາລະນະລັດປະຊາ ທິປະໄຕປະຊາຊົນລາວ**.ວິທະຍານິພົນສສ.ດ ສາຂາພາສາໄທ, ມະຫາວິທະຍາໄລນະເຣສວນ.

ວຽງຄໍາ ນັນທະວົງດວງສີ. (2006).**ສິ້ນກັບແມ່ຍິງລາວ**. ວຽງຈັນ:ໂຮງພິມປານຄໍາໄຮ-ເທັກ.

ທ່ານບຸນສີ ບຸນວິໄລ. (2010). ບ້ານສິບຣາວ ເມືອງສິບເບົາ

ແຂວງຫົວພັນ. ສຳພາດເມື່ອວັນທີ 29 ສິງຫາ.

ທ່ານນາງບຸນສອນ. (2010). ບ້ານສິບຮາວ ເມືອງສິບເບົາ ແຂວງຫົວພັນ. ສຳພາດເມື່ອວັນທີ 26 ສິງຫາ.

ທ່ານບຸນພອນ ຈາວວິ. (2010). ນາຍບ້ານສິບຮາວ ເມືອງສິບເບົາ ແຂວງຫົວພັນ. ສຳພາດເມື່ອວັນທີ 26 ສິງຫາ.